ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

3703.

ກະຊວງສຶກສາທິການ ແລະ ກິລາ                    ເລກທີ          /ສສກ

ນະຄອນຫຼວງວຽງຈັນ, ວັນທີ31 ສິງຫາ 2021

# ຂໍ້ຕົກລົງ

## ວ່າດ້ວຍການຮ່ວມມື ແລະ ນໍາໃຊ້ຊັບພະຍາກອນຮ່ວມກັນລະຫວ່າງ ກົມການສຶກສານອກໂຮງຮຽນ ແລະ ກົມອາຊີວະສຶກສາ

- ອີງຕາມ ກົດໝາຍວ່າດ້ວຍອາຊີວະສຶກສາ ສະບັບເລກທີ 07/ສພຊ, ລົງວັນທີ 12 ມິຖຸນາ 2019;
- ອີງຕາມ ດໍາລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 253/ນຍ, ລົງວັນທີ 26 ພຶດສະພາ 2020;
- ອີງຕາມ ດໍາລັດນາຍົກລັດຖະມົນຕີວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ສະບັບເລກທີ 208/ລບ, ລົງວັນທີ 23 ມີນາ 2020;
- ອີງຕາມ ການສະເໜີຂອງກົມການສຶກສານອກໂຮງຮຽນສະບັບເລກທີ 0619/ກສນ,ລົງວັນທີ 23 ສິງຫາ 2021.

ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:

ມາດຕາ 01: ໃຫ້ກົມການສຶກສານອກໂຮງຮຽນ ແລະ ກົມອາຊີວະສຶກສາ ຮ່ວມມືກັນນໍາໃຊ້ຊັບພະຍາກອນມະນຸດ ແລະ ສິ່ງອໍານວຍຄວາມສະດວກຂອງຕົນ ເພື່ອຕອບສະໜອງວຽກງານຝຶກອົບຮົມວິຊາຊີບ, ບໍາລຸງຍົກລະດັບການສຶກສາໃຫ້ມີປະສິດທິຜົນ;

ມາດຕາ 02: ໃຫ້ກົມການສຶກສານອກໂຮງຮຽນ, ກົມອາຊີວະສຶກສາ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ, ສະຖານອາຊີວະສຶກສາ ແລະ ສະຖານການສຶກສານອກໂຮງຮຽນ ຄົ້ນຄວ້າ, ວາງແຜນ ແລະ ນໍາໃຊ້ຊັບພະຍາກອນຮ່ວມກັນມີໜ້າທີ່ຊີ້ນໍາ ແລະ ຈັດຕັ້ງປະຕິບັດຕາມໜ້າທີ່ ແລະ ຄວາມຮັບຜິດຊອບຂອງໃຜລາວ ;

ມາດຕາ 03: ໃຫ້ຫ້ອງການກະຊວງສຶກສາທິການ ແລະ ກິລາ, ກົມຈັດຕັ້ງ ແລະ ພະນັກງານ, ກົມການເງິນ, ກົມການສຶກສານອກໂຮງຮຽນ, ກົມອາຊີວະສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນ;

ມາດຕາ 04: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຊັນແທນ ລັດຖະມົນຕີ

ບ່ອນສົ່ງ:

| | | |
|---|---|---|
| 1. | ຫ້ອງການ ກະຊວງສຶກສາທິການ ແລະ ກິລາ | 1 ສະບັບ |
| 2. | ກົມຈັດຕັ້ງ ແລະ ພະນັກງານ | 1 ສະບັບ |
| 3. | ກົມການເງິນ | 1 ສະບັບ |
| 4. | ກົມການສຶກສານອກໂຮງຮຽນ | 1 ສະບັບ |
| 5. | ກົມອາຊີວະສຶກສາ | 1 ສະບັບ |
| 6. | ກົມນິຕິກໍາ ແລະ ປະກັນຄຸນນະພາບການສຶກສາ | 1 ສະບັບ |
| 7. | ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ພາກສ່ວນລະ | 1 ສະບັບ |
| 8. | ພາກສ່ວນທີ່ກ່ຽວຂ້ອງ ພາກສ່ວນລະ | 1 ສະບັບ |
| 9. | ເກັບມ້ຽນ | 1 ສະບັບ |

ປ.ສີສຸກ ວິງວິຈິດ